# ບໍ່ຄຳ-ທອງ ເຊໂປນ ສປປ ລາວ

## ຂໍ້ມູນສຳຄັນ







## ບໍ່ຄຳ-ທອງ ເຊໂປນ

ໂຄງການບໍ່ຄຳ-ທອງ ເຊໂປນ ເປັນໂຄງການຂຸດຄົ້ນບໍ່ແຮ່ແບບເປີດໜ້າດິນທີ່ເມືອງວິລະບູລີ, ແຂວງ ສະຫວັນນະເຂດ, ພາກໃຕ້ຂອງ ສປປ ລາວ.

ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ (ລຊມລ) ແມ່ນຊື່ຈົດທະບຽນຂອງບໍລິສັດ ເຈົ້າຂອງໂຄງການດຳເນີນງານໂຄງການບໍ່ຄຳ-ທອງ ເຊໂປນ. ບໍລິສັດ ຊີເຟີງ ຈີຫຼີງ ບໍ່ຄຳ ຈຳກັດ (ຊີເຟີງ) ເປັນບໍລິສັດແມ່ ທີ່ຖືຫຸ້ນ 90% ໃນ ລຊມລ. ສ່ວນລັດຖະບານແຫ່ງ ສປປ ລາວ ແມ່ນ ຖືຫຸ້ນ 10%.

ໂຄງການບໍ່ຄຳ-ທອງ ເຊໂປນ ນຳໃຊ້ຂະບວນການສະກັດເອົາໂລຫະທອງຈາກການແຍກດ້ວຍກະແສໄຟຟ້າ (SX-EW). ແຜ່ນທອງດັ່ງກ່າວຈະຖືກຂົນສົ່ງຜ່ານທາງບົກ ແລະ ຜ່ານທາງທະເລ ເຖິງຜູ້ຜະລິດໃນອາຊີ ເພື່ອຜະລິດສາຍເຄເບີ້ນ, ສາຍໄຟ ແລະ ທໍ່ຕ່າງໆ.

ປັດຈຸບັນນີ້ ທາງບໍລິສັດກຳລັງດຳເນີນການສຶກສາ ແລະ ວຽກງານພື້ນຖານ ເພື່ອໃຫ້ສາມາດກັບຄືນມາຜະລິດຄຳ ໃນ ໄຕມາດ 3 ຂອງປີ 2020 ໄປໃຫ້ໄດ້ອີກຢ່າງຕ່ຳ 10 ປີ. ພ້ອມກັນນີ້ ກໍໄດ້ກັບຄືນມາສຳຫຼວດຄຳ ເພື່ອຍືດອາຍຸການຂຸດຄົ້ນບໍ່ແຮ່ໃຫ້ຍືນຍາວໄປອີກຢ່າງຕ່ຳ 10 ປີ ໂດຍຄາດວ່າຈະຜະລິດແທ່ງຄຳໄດ້ປະມານ 230.000 ອອນສ໌ (6 ໂຕນ) ຕໍ່ປີ.

ໃນປີ 2020, ໂຄງການຄຳ-ທອງເຊໂປນມີຄາດໝາຍການຜະລິດແຜ່ນທອງໃຫ້ໄດ້ 45.000 ໂຕນ ແລະ ຜະລິດແທ່ງຄຳໃຫ້ໄດ້ 1,5 ໂຕນ ພ້ອມທັງໄດ້ວາງເປົ້າໝາຍໃນການສຳຫຼວດຄຳ ໃຫ້ໄດ້ຫຼາຍກວ່າ 4,25 ລ້ານອອນສ໌ (130ໂຕນ).

ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ
万 象 矿 业 有 限 公 司
CHIFENG LXML SEPON

### ບໍ່ຄຳ-ທອງ ເຊໂປນ, ສປປ ລາວ




## ຂໍ້ມູນສຳຄັນ

| | |
|---|---|
| ຜົນຜະລິດລວມຍອດ ປີ 2019 | ແຜ່ນທອງ 71,006 ໂຕນ |
| ທີ່ຕັ້ງໂຄງການ | ເມືອງ ວິລະບູລີ, ແຂວງ ສະຫວັນນະເຂດ, ສປປ ລາວ |
| ຜະລິດຕະພັນ | ແຜ່ນທອງ, ແທ່ງຄຳປະສົມ |
| ວິທີການຂຸດຄົ້ນ | ຂຸດຄົ້ນແບບເປີດໜ້າດິນ |
| ຂະບວນການຜະລິດ | ຂະບວນການສະກັດທອງດ້ວຍກະແສໄຟຟ້າ (SX-EW) |
| ເລີ່ມຕົ້ນຜະລິດ | ເລີ່ມຜະລິດ ຄຳ ໃນເດືອນ ທັນວາ 2003 ແລະ ທອງ ໃນປີ 2005. ໄດ້ຢຸດຕິການຜະລິດຄຳ ໃນປີ 2013 ຍ້ອນບໍ່ມີກຳໄລບວກກັບຄຸນນະພາບສິນແຮ່ ຫລຸດລົງ. ຄາດວ່າຈະກັບມາຜະລິດຄຳອີກຄັ້ງໜຶ່ງໃນປີ 2020. |
| ຄາດໝາຍອາຍຸໂຄງການ | ການຜະລິດທອງ ເຖິງກາງປີ 2020. ການຜະລິດຄຳ ຈາກແຮ່ຄຳເຄົ້າຄາດວ່າເຖິງປີ 2030. |
| ແຮງງານລວມໃນປີ 2019 | ພະນັກງານ ລຊມລ - 1,564 (ຄົນລາວ 95%) ພະນັກງານຜູ້ຮັບເໝົາ - 1,469 ຄົນ |







# ການພັດທະນາທ້ອງຖິ່ນ ແລະ ເສດຖະກິດ

ນັບຕັ້ງແຕ່ເລີ່ມການຜະລິດໃນປີ 2002, ໂຄງການບໍ່ຄໍາ-ທອງ ເຊໂປນ ໄດ້ປະກອບສ່ວນເປັນລາຍຮັບໂດຍກົງໃຫ້ແກ່ລັດຖະບານແຫ່ງ ສປປ ລາວ ກວ່າ US$1,5 ຕື້ ໂດຍການຈ່າຍພາສີອາກອນ, ຄ່າຊັບພະຍາກອນແຮ່ທາດ ແລະ ເງິນປັນຜົນ. ຜົນປະໂຫຍດທາງອ້ອມທີ່ໄດ້ຮັບຈາກໂຄງການ ຜ່ານການສ້າງວຽກເຮັດງານທໍາ, ການຝຶກ ອົບຮົມ ແລະ ໂຄງການພັດທະນາທຸລະກິດທ້ອງຖິ່ນ ຍັງໄດ້ປະກອບສ່ວນ ຢ່າງສູງເຂົ້າໃນ ການພັດທະນາເສດຖະກິດ ແລະ ສັງຄົມ ຂອງ ສປປ ລາວ.

ການພັດທະນາແບບຍືນຍົງ ຂອງໂຄງການບໍ່ຄໍາ-ທອງ ເຊໂປນລວມມີ:

## ການສົ່ງເສີມພະນັກງານຄົນລາວ

ໂຄງການບໍ່ຄໍາ-ທອງ ເຊໂປນດໍາເນີນການຝຶກອົບຮົມ ແລະ ເປີດໂອກາດໃຫ້ແກ່ພະນັກງານໃຫ້ມີຄວາມກ້າວໜ້າໃນໜ້າທີ່ວຽກງານ ແລະ ໄດ້ຮັບການສະໜັບສະໜູນດ້ານການສຶກສາ. ບໍລິສັດໄດ້ສະໜອງທຶນການສຶກສາຫຼາຍລ້ານໂດລາ ສະຫະລັດໃຫ້ແກ່ພະນັກງານຄົນລາວເພື່ອໄປສຶກສາທີ່ ປະເທດອົດສະຕາລີ, ແຜນງານຝຶກອົບຮົມເຕັກນິກວິຊາຊີບ, ການຝຶກສອນ ແລະ ການຝຶກອົບຮົມໃນໜ້າວຽກ ເພື່ອພັດທະນາ ທັກສະດ້ານອຸດສະຫະກໍາ. ໄດ້ມີພະນັກງານຄົນລາວຫຼາຍກວ່າ 180 ຄົນ ໄດ້ຮັບການແຕ່ງ ຕັ້ງໃນຕໍາແໜ່ງ ຫົວໜ້າສາຍງານ, ຫົວໜ້າໜ່ວຍງານ ແລະ ໃນລະດັບຜູ້ຈັດການ.

## ໂຄງການພັດທະນາຊຸມຊົນແບບມີສ່ວນຮ່ວມ

ປະຊາຊົນຫຼາຍກວ່າ 14,000 ຄົນໃນ 72 ບ້ານອ້ອມຂ້າງເຂດບໍ່ແຮ່ ໄດ້ມີຊີວິດການເປັນຢູ່ທີ່ດີຂຶ້ນ ເຊິ່ງເຂົາເຈົ້າສາມາດເຂົ້າເຖິງການບໍລິ ການຂັ້ນພື້ນຖານ ທີ່ຕົນເອງມີອໍານາດໃນການຕັດສິນໃຈ ໃນການຈັດຕັ້ງ ແລະ ບັນລຸເປົ້າໝາຍຜົນສໍາເລັດໃນຂົງເຂດບູລິມະສິດການພັດທະນາຂອງຕົນ ໂດຍການນໍາໃຊ້ກອງທຶນພັດທະນາທ້ອງຖິ່ນ ແລະ ກອງທຶນເພື່ອຊຸກຍູ້ຊີວິດການເປັນຢູ່ໃຫ້ແກ່ຜູ້ດ້ອຍໂອກາດ ຊຶ່ງມີມູນຄ່າລວມທັງໝົດກວ່າ US$13 ລ້ານ ໃນກວ່າ 260 ໂຄງການ ລວມມີ: ການກໍ່ສ້າງອາຄານຮຽນ, ຖະໜົນຫົນທາງ, ສຸກສາລາ, ຫ້ອງນໍ້າ, ການສະໜອງນໍ້າສະອາດ, ການປູກຝັງ ແລະ ລ້ຽງສັດ ເປັນຕົ້ນ.

## ການສ້າງລາຍຮັບໃຫ້ແກ່ຊຸມຊົນ

ແຜນງານພັດທະນາກຸ່ມທຸລະກິດທ້ອງຖິ່ນຂອງ ລຊມລ ມີຈຸດປະສົງໃນການສ້າງໂອກາດໃຫ້ມີລາຍຮັບທີ່ຫຼາກຫຼາຍໃຫ້ແກ່ຊຸມຊົນ, ສ້າງສະພາບແວດລ້ອມໃນການດໍາເນີນທຸລະກິດໃໝ່ໃຫ້ມີຄວາມຈະເລີນເຕີບໂຕ ແລະ ຊ່ວຍສ້າງຊີວິດ ການເປັນຢູ່ຂອງຊຸມຊົນໃຫ້ມີຄວາມຍືນຍົງພາຍຫຼັງສິ້ນສຸດອາຍຸການຂອງບໍ່ແຮ່. ລຊມລ ໄດ້ຊື້ ສິນຄ້າຈາກທ້ອງຖິ່ນໃນມູນຄ່າກວ່າ $3 ລ້ານ ຈາກ 34 ກຸ່ມທຸລະກິດທ້ອງຖິ່ນ (ໃນນັ້ນ75% ແມ່ນໝາກໄມ້, ຜັກ ແລະ ຜົນຜະລິດທ້ອງຖິ່ນ) ຊຶ່ງເຮັດໃຫ້ເຂົາເຈົ້າສາມາດສ້າງລາຍຮັບລວມ ທັງໝົດໄດ້ກວ່າ $33 ລ້ານ ແລະ ໄດ້ສ້າງວຽກເຮັດງານທໍາໃຫ້ແກ່ຊຸມຊົນໄດ້ຫຼາຍ ກວ່າ 500 ຄົນ.

## ການພັດທະນາ ພື້ນຖານໂຄງລ່າງ

**ລຊມລ** ຍັງໄດ້ລົງທຶນຈໍານວນຫຼາຍຮ້ອຍລ້ານໂດລາ ສະຫະລັດເຂົ້າໃນ ການສະໜອງໄຟຟ້າ, ສ້າງເຄືອຂ່າຍ ຫົນທາງ ແລະ ການເກັບກູ້ລະເບີດ ທີ່ຍັງບໍ່ທັນແຕກ ເພື່ອໃຫ້ຊຸມຊົນມີຄວາມປອດໄພຫຼາຍຂຶ້ນ ແລະ ເພີ່ມໂອກາດໃຫ້ແກ່ການ ພັດທະນາຂອງ ແຂວງ ສະຫວັນນະເຂດ.

# ກ່ຽວກັບ

## ບໍລິສັດ ຊີເຟິງ ຈີຫຼົງ ບໍ່ຄໍາ ຈໍາກັດ

ບໍລິສັດ ຊີເຟິງ ຈີຫຼົງ ບໍ່ຄໍາ ຈໍາກັດ (ຊີເຟິງ) ແມ່ບໍລິສັດທີ່ຈົດທະບຽນໃນຕະຫຼາດຮຸ້ນຊຽງໄຮ້ ໃນນາມບໍລິສັດຜູ້ຜະລິດໂລຫະແຮ່ທາດ (SH:600988) ຊຶ່ງມີສໍານັກງານໃຫຍ່ ຕັ້ງຢູ່ເມືອງ ຊີເຟິງ, ມົນລະລັດມົງໂກເລຍໃນ, ສປ ຈີນ. ຊີເຟິງ ເປັນຜູ້ນໍາໜ້າໃນການຜະລິດຄໍາໃນ ສປ ຈີນ ແລະ ມີຄວາມຊໍານິຊໍານານໃນການຊີ້ກິດຈະການຂຸດຄົ້ນ-ຜະລິດຄໍາ, ການສະກັດຊັບພະຍາກອນແບບປະສົມປະສານ ແລະ ການນໍາໃຊ້ປະໂຫຍດສູງສຸດ. ຜະລິດຕະພັນຂອງບໍລິສັດ ລວມມີ ໂລຫະມີຄ່າ ແລະ ຫາຍາກເຊັ່ນ: ຄໍາ, ທອງ, ບິສມັດ, ປາລາດຽມ ແລະ ໂຣດຽມ.

# ຂໍ້ມູນສໍາຄັນ

| | |
|---|---|
| US$ 48 ລ້ານ | ລົງທຶນໃນການເກັບກູ້ລະເບີດທີ່ບໍ່ທັນແຕກ (58,500 ໜ່ວຍ ໃນເນື້ອທີ່ 2,900 ເຮັກຕາ) |
| US$ 33 ລ້ານ | ລາຍຮັບຂອງກຸ່ມທຸລະກິດທ້ອງຖິ່ນ ຈາກການສະໜອງສິນຄ້າ ແລະ ການບໍລິການໃຫ້ແກ່ບໍລິສັດ |
| US$ 13 ລ້ານ | ປະກອບສ່ວນເຂົ້າກອງທຶນພັດທະນາທ້ອງຖິ່ນ ແລະ ກອງທຶນພັດທະນາບ້ານ |
| THE 1000 DAY PROJECT IMPROVING THE NUTRITIONAL STATUS OF CHILDREN IN LAOS — US$ 2.9 ລ້ານ | ປະກອບສ່ວນສົມທົບທຶນເຂົ້າໃນໂຄງການ 1000 ວັນ ກັບລັດຖະບານ ສປປລາວ ແລະ ອົງການ UNICEF (ນັບຕັ້ງແຕ່ປີ 2012) |


ສອບຖາມຂໍ້ມູນເພີ່ມຕື່ມ:

**ສອນປະເສີດ ນິຣັດໃສ**

ຫົວໜ້າສື່ສານ ແລະ ປະຊາສໍາພັນ

ໂທ: +856 21 268 268

ມືຖື: +856 20 2999 6461

ອີເມວ: LXML.Information@LXML.LA


ລ້ານຊ້າງ ມິເນໂຣນສ໌ ລີມິເຕັດ
万象矿业有限公司
CHIFENG LXML SEPON